ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 084/ຈທວ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 19 ກຸມພາ 2020

ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ;
- ບໍລິສັດ ລາວ ທອບເອເຊຍ ໂລຈິສຕິກ ຈຳກັດ.
- ວິສາຫະກິດສ່ວນບຸກຄົນ ບ້ານວັດທະນະທຳ ແລະ ລີສອດສວນພູໄທ ທີລະ
- ບໍລິສັດ ເອແອລເອຟ ຈະເລີນຊັບ ຈຳກັດຜູ້ດຽວ

ເລື່ອງ: ແຈ້ງຍົກເລີກການ ຍ້າຍຊື່ ແລະ ຂໍ້ມູນທັງໝົດຂອງວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດແຫ່ງຊາດໄປໄວ້ ໃນບັນຊີທຸລະກິດບໍ່ມີຕົວຕົນ (AEL)

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ບົດແນະນຳ ມາດຕະການຕໍ່ການລະເມີດຂອງວິສາຫະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດ, ສະບັບເລກທີ 1556/ກທຄວ.ອຄ, ລົງວັນທີ 6 ພະຈິກ 2019;
- ອີງຕາມ ໜັງສືແຈ້ງ ຍ້າຍຊື່ ແລະ ຂໍ້ມູນທັງໝົດຂອງວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດແຫ່ງຊາດ ໄປໄວ້ໃນບັນຊີທຸລະກິດບໍ່ມີຕົວຕົນ (AEL), ສະບັບເລກທີ 011/ຈທວ.ກທຄວ, ລົງວັນທີ 8 ມັງກອນ 2020.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກໜັງສືແຈ້ງ ຍ້າຍຊື່ ແລະ ຂໍ້ມູນທັງໝົດຂອງວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດແຫ່ງຊາດ ໄປໄວ້ໃນບັນຊີທຸລະກິດບໍ່ມີຕົວຕົນ (AEL) ເນື່ອງຈາກວິສາຫະກິດໄດ້ປະຕິບັດບັນຫາທີ່ລະເມີດຂອງຕົນສຳເລັດ ຕາມໜັງສືແຈ້ງ ເລກທີ 011/ຈທວ.ກທຄວ, ລົງວັນທີ 8 ມັງກອນ 2020 ຈຳນວນ 3 ວິສາຫະກິດທີ່ມີລາຍຊື່ ດັ່ງນີ້:

   1.1 ບໍລິສັດ ລາວ ທອບເອເຊຍ ໂລຈິສຕິກ ຈຳກັດ, ໃບທະບຽນວິສາຫະກິດ ເລກທີ 0463/ຈທວ, ລົງວັນທີ 29 ມີນາ 2019.

   1.2 ວິສາຫະກິດສ່ວນບຸກຄົນ ບ້ານວັດທະນະທຳ ແລະ ລີສອດສວນພູໄທ ທີລະ, ໃບທະບຽນວິສາຫະກິດ ເລກທີ 0409/ຈທວ, ລົງວັນທີ 26/03/2019.

   1.3 ບໍລິສັດ ເອແອລເອຟ ຈະເລີນຊັບ ຈຳກັດຜູ້ດຽວ, ໃບທະບຽນວິສາຫະກິດ ເລກທີ 0468/ຈທວ, ລົງວັນທີ 29/03/2019.

2. ຜົນຂອງການຍົກເລີກ (ຕາມຂໍ້ 1 ເທິງນີ້) ເຮັດໃຫ້ວິສາຫະກິດດັ່ງກ່າວ ສາມາດສືບຕໍ່ເຄື່ອນໄຫວທຸລະກິດໄດ້ ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ ເປັນຕົ້ນໄປ;
3. ສໍາລັບບັນດາຫົວໜ່ວຍວິສາຫະກິດອື່ນ ທີ່ຍັງມີລາຍຊື່ຕາມໜັງສືແຈ້ງ ຍ້າຍຊື່ ແລະ ຂໍ້ມູນທັງໝົດຂອງວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດແຫ່ງຊາດ ໄປໄວ້ໃນບັນຊີທຸລະກິດບໍ່ມີຕົວຕົນ (AEL) ເລກທີ 011/ຈທວ.ກທຄວ, ລົງວັນທີ 8 ມັງກອນ 2020 ທີ່ຍັງບໍ່ເຂົ້າໄປພົບພັນເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທຄວ ແມ່ນຍັງມີຜົນຕາມເນື້ອໃນ ດັ່ງກ່າວທຸກປະການ.

ແຈ້ງມາເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ທ. ຈຽງຄໍາ ທອງປະເສີດ

Mrs. Chiengkham THONGPASEUTH